# ບົດປະກອບຄໍາເຫັນ

## ຂອງ ທ່ານ ອຸເດດ ສຸວັນນະວົງ ປະທານສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ

## ຕໍ່ ກອງປະຊຸມທຸລະກິດລາວ ຄັ້ງທີ 14 ທີ່ ນະຄອນຫຼວງວຽງຈັນ ວັນທີ 27/03/2023

*********

- **ຮຽນ : ທ່ານ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີ ແຫ່ງ ສ ປປ ລາວ ທີ່ນັບຖື**
- **ຮຽນ : ທ່ານ ມະໄລທອງ ກົມມະສິດ, ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ທີ່ນັບຖື**
- **ຮຽນ : ບັນດາ ທ່ານ ລັດຖະມົນຕີ, ຮອງລັດຖະມົນຕີພ້ອມດ້ວຍຄະນະ**
- **ຮຽນ : ບັນດາ ທ່ານ ທູຕານຸທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ**
- **ຮຽນ : ບັນດາ ທ່ານ ຜູ້ຕາງໜ້າທຸລະກິດລາວ ແລະ ຈາກຕ່າງປະເທດ**
- **ຮຽນ : ທ່ານຍິງ - ທ່ານຊາຍ ທີ່ບັນຖື**

ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງສູງທີ່ໄດ້ຕາງໜ້າໃຫ້ແກ່ຜູ້ປະກອບການ ທຸລະກິດໃນຂອບເຂດທົ່ວປະເທດ ຂຶ້ນປະກອບຄໍາເຫັນເຫັນຕໍ່ກອງປະຊຸມທຸລະກິດລາວ ຄັ້ງທີ່ 14 ໃນມື້ນີ້. ກ່ອນອື່ນໝົດ ຂ້າພະເຈົ້າ ຂໍຂອບໃຈ ເປັນຢ່າງສູງມາຍັງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປລາວ ທີ່ໄດ້ໃຫ້ກຽດມາເປັນປະທານກອງປະຊຸມ ລະຫວ່າງພາກລັດ ແລະ ພາກທຸລະກິດ ອັນມີຄວາມໝາຍຄວາມສໍາຄັນໃນມື້ນີ້.

ຂ້າພະເຈົ້າຂໍຖືໂອກາດນີ້ນໍາສະເໜີກ່ຽວກັບ ມູມມອງ ຂອງ ພາກທຸລະກິດລາວ ຕໍ່ສະພາບເສດຖະກິດ ແລະ ແວດລ້ອມໃນການດໍາເນີນທຸລະກິດໃນ ສປປ ລາວ ໃນຊຸມປີຜ່ານມາ ເຊິ່ງເປັນປີທີ ລັດຖະບານ ກໍາລັງຈັດຕັ້ງປະຕິບັດວາລະແຫ່ງຊາດ ເພື່ອແກ້ໄຂສະພາບເສດຖະກິດ-ການເງິນ ແລະ ຟື້ນຟູຈາກການກະທົບຂອງໄພພິບັດ COVID 19.

ໃນໄລຍະປະຈຸບັນ ເສດຖະກິດຂອງລາວ ໄດ້ຖືກກະທົບຈາກການປ່ຽນແປງຂອງລະບົບ ແລະ ກົນໄກ ຕະຫຼາດ ແລະ ການສະໜອງ, ການປ່ຽນແປງຕ່ອງໂສ້ ແລະ ຊ່ອງທາງການສະໜອງໃນໂລກ ທີ່ ເນື່ອງມາຈາກຄວາມເຄັ່ງຕຶງທາງດ້ານການເມືອງ ໃນພູມມີພາກ, ຂໍ້ຂັດແຍ່ງທາງດ້ານສົງຄາມ, ແລະ ໄພພິບັດ COVID 19 ເຊິ່ງໄດ້ເຮັດໃຫ້ມີການປ່ຽນແປງໃນດ້ານ ວິຖີຊີວິດ ແລະ ທັດສະນະ ໃນການອຸປະໂພກ-ບໍລິໂພກ ຂອງຄົນໃນໂລກ ເຮັດໃຫ້ມີການປ່ຽນແປງທາງດ້ານການຄ້າ ແລະການເລັ່ງລັດຫັນເຂົ້າສູ່ ເສດຖະກິດດິຈິຕອນ, ມີການປ່ຽນແປງຕະຫຼາດການຄ້າ ເພີ່ມທະວີການຄ້າລະຫວ່າງປະເທດ ໂດຍໃຊ້ລະບົບດິຈິຕອນ ເພື່ອການເຊື່ອໂຍງດ້ານເສດຖະກິດຫຼາຍຂຶ້ນ. ເນື່ອງ

ຈາກສະພາບການປ່ຽນແປງດິນຟ້າອາກາດ ແລະ ການເພີ່ມຂຶ້ນຂອງ ອຸທົກກະໄພທຳມະຊາດ ໄດ້ມີຂະບວນການ ຫັນເປັນເປັນອຸດສາຫະກຳສີຂຽວ ແລະ ຍືນຍົງ ແລະ ມີການເພີ່ມມາດຕະການປ້ອງກັນ ເຊິ່ງເປັນການສະກັດກັ້ນການຄ້າໃຫ້ແກ່ປະເທດດ້ອຍພັດທະນາ ຄື ສປປ ລາວ ຂອງພວກເຮົາ.

ສິ່ງທ້າທ້າຍ ແລະ ການປ່ຽນແປງ ທີ່ກ່າວມາຂ້າງເທິງນີ້ ແມ່ນໄດ້ກະທົບ ຕໍ່ ເສດຖະກິດ ແລະ ແວດລ້ອມການດຳເນີນທຸລະກິດຢູ່ ສ ປປ ລາວ, ປະຈຸບັນສະພາບການເຫຼົ່ານີ້ສົ່ງຜົນກະທົບກັບສະພາບວິກິດທາງດ້ານເສດຖະກິດການເງິນ ແລະ ການເຕີບໂຕຂອງເສດຖະກິດມະຫາພາກໃຫ້ທີ່ຢູ່ໃນອັດຕາທີ່ຕໍ່າ (ອັດຕາການຂະຫຍາຍຕົວໃນອັດຕາ 3% ໃນ ປີ 2021), ສະພາບຂາດແຄນເງິນຕາ ແລະ ສະພາບເງິນເຟີ້, ສະພາບການຄອບຄອງຕະຫຼາດຂອງເສດຖະກິດນອກລະບົບ ແລະ ປະສິດທິພາບຂອງການບໍລິຫານ ແລະ ສົ່ງເສີມການຜະລິດທຸລະກິດຂອງພາກລັດ ຍັງບໍ່ທັນສະພາບການ ເຊິ່ງໄດ້ສົ່ງຜົນກະທົບເພີ່ມເຕີມໃຫ້ແກ່ເສດຖະກິດ ແລະ ແວດລ້ອມທຸລະກິດ ໃນປະຈຸບັນ. ສະພາບການຂາດເຂີນເງິນຕາ, ອັດຕາແລກປ່ຽນເງິນກີບ ຕໍ່ ສະກຸນເງິນຕາຕ່າງປະເທດ ເປັນສິ່ງທ້າທ້າຍອັນໃຫຍ່ຫຼວງ, ອີງຕາມຕົວເລກທາງການຈາກ ທະນາຄານແຫ່ງ ສປປ ລາວ ອັດຕາເງິນເຟີ້ໃນເດືອນ 2/2023 ມີສູງເຖິງ 41,6% ເພີ່ມຂຶ້ນ 34% ທຽບໃສ່ເດືອນ 2/2022. ການເພີ່ມຂຶ້ນຂອງອັດຕາເງິນເຟີ້ ແມ່ນກະທົບເຖິງລາຄາສຳເລັດຮູບຂອງການຜະລິດ ແລະ ບໍລິມາດຂົນສົ່ງ ຍ້ອນການເພີ່ມຂຶ້ນຂອງລາຄານ້ຳມັນ ເຖິງ 20-25% ແຕ່ປີ 2022. ຜົນກະທົບອັນຕໍ່ມາແມ່ນການຂາດແຄນແຮງງານໃນອຸດສາຫະກຳ ເພາະມີການເພີ່ມແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ຍ້ອນມີລາຍຮັບດີກວ່າ, ເຮັດໃຫ້ເກີດການຢຸດຕິການຜະລິດກະສິກຳຢູ່ຫຼາຍແຫ່ງ ຍ້ອນບໍ່ມີແຮງງານ, ແລະ ການອ່ອນຄ່າຂອງເງິນກີບ ທີ່ເຮັດໃຫ້ລາຄາສິນຄ້າທີ່ນຳເຂົ້າເພີ່ມຂຶ້ນ ຍັງສົ່ງຜົນໃຫ້ເຮົາບໍ່ສາມາດນຳເຂົ້າອາຫານອັນຈຳເປັນເພື່ອການບໍລິໂພກ ເຊິ່ງກໍ່ກະທົບເຖິງຄວາມໝັ້ນຄົງທາງດ້ານສະບຽງອາຫານ. ສະພາບອັດຕາເງິນຟີ້ ແລະ ການຂາດແຄນແຮງງານຍັງໄດ້ກະທົບເຖິງການຂະຫຍາຍການລົງທຶນໃນຂະແໜງອຸດສາຫະກຳປຸງແຕ່ງ ແລະ ການບໍລິການ.

- ການຄອບຄອງຕະຫຼາດຂອງເສດຖະກິດນອກລະບົບຍັງຢູ່ໃນອັດຕາທີ່ສູງ ສະພາບດັ່ງກ່າວແມ່ນເຮັດໃຫ້ມີການແຂ່ງຂັນ ແລະ ມີແນວຄິດແບບບໍ່ຖືກລະບຽບກົດໝາຍ, ເຮັດໃຫ້ລັດຖະບານບໍ່ສາມາດ ເກັບພາສີ, ອາກອນ ແລະ ຄ່າທຳນຽມຕາມຕົວຈິງໄດ້ ແລະ ທັງເສີມສ້າງໃຫ້ເກີດມີການສໍ້ລາດບັງຫຼວງ, ການຈັດ ຕັ້ງປະຕິບັດລະບຽບກົດໝາຍ ປາບປາມຜູ້ກະທຳຜິດ ແລະ ສົ່ງເສີມທຸລະກິດເຂົ້າສູ່ລະບົບຍັງຈະຕ້ອງເອົາໃຈໃສ່ເພີ່ມເຕີມ.
- ສະພາບການບໍລິການສົ່ງເສີມໃຫ້ແກ່ການຜະລິດທຸລະກິດຍັງບໍ່ທັນມີປະສິດທິຜົນເທົ່າທີ່ຄວນ ໂດຍສະ ເພາະແມ່ນການປະສານສົມທົບ ລະຫວ່າງ ກະຊວງ, ກົມກອງ, ລະຫວ່າງ

ສູນກາງ ແລະ ທ້ອງຖິ່ນ ເພື່ອການອໍານວຍຄວາມສະດວກ, ຄຸ້ມຄອງ, ກວດກາ, ຕິດຕາມ ທຸລະກິດ ຕາມແຕ່ລະຂະແໜງການ. ພາກລັດ ແລະ ພາກທຸລະກິດ ໄດ້ມີຫຼາຍເວທີປຶກສາຫາລືເພື່ອແກ້ໄຂ ບັນຫາຊ່ວຍພາກທຸລະກິດ ແຕ່ໂດຍລວມແລ້ວ ບັນຫາທີ່ຍົກຂຶ້ນ ຍັງມີຫຼາຍບັນຫາທີ່ຍັງບໍ່ໄດ້ຮັບການແກ້ໄຂ ແລະ ການແກ້ໄຂກໍ່ໃຊ້ເວລາຍາວເກີນໄປ.

**ບັນດາທ່ານແຂກຜູ້ມີກຽດທີ່ນັບຖື**

ເພື່ອສາມາດແກ້ໄຂສະພາບທີ່ກະທົບ ແລະ ກົດໜ່ວງ ເສດຖະກິດ ໂດຍສະເພາະແມ່ນການແກ້ໄຂສະພາບບໍລິການສົ່ງເສີມຂອງພາກລັດຖະບານ, ກອງປະຊຸມທຸລະກິດລາວ ຫຼື (LBF) ກໍ່ໄດ້ເປັນກົນໄກໜຶ່ງທີ່ພາກລັດ ແລະ ພາກທຸລະກິດ ໄດ້ຮ່ວມກັນຄົ້ນຄວ້າບັນຫາ ແລະ ຊອກຫາຊ່ອງທາງແກ້ໄຂຮ່ວມກັນ. ພວກເຮົາໄດ້ເລີ່ມກົນໄກນີ້ມາແຕ່ປີ 2005 ແລະ ໄດ້ປັບປຸງ ກົນໄກການປຶກສາຫາລືເປັນກ້າວໆມາຕາມຍຸກສະໄໝ. ມາເຖິງໄລຍະນີ້ ກົນໄກຂອງ ກອງປະຊຸມທຸລະກິດລາວ ແມ່ນກໍ່ຖືວ່າຍັງບໍ່ທັນໄດ້ສົມບູນເທື່ອ ເນື່ອງຈາກວ່າ ກອງປະຊຸມດັ່ງກ່າວນີ້ ຍັງບໍ່ໄດ້ມີ ນິຕິກໍາ ທີ່ກໍານົດກ່ຽວກັບ ໜ້າທີ່, ບົດບາດ ແລະ ການເຄື່ອນໄຫວຢ່າງຊັດເຈນ ຂອງແຕ່ລະກົມກອງ ຂອງພາກລັດ ແລະ ພາກທຸລະກິດ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດ. ໃນໂອກາດນີ້ ຂ້າພະເຈົ້າຈຶ່ງສະເໜີທ່ານນາຍົກລັດຖະມົນຕີໄດ້ໃຫ້ພາກສ່ວນທີ່ກ່ຽວຂ້ອງ ສຶກສາ ແລະ ສ້າງນິຕິກໍາວ່າດ້ວຍກອງປະຊຸມທຸລະກິດລາວໃຫ້ລະອຽດ.

ຄຽງຄູ່ກັບ ກົນໄກກອງປຊຸມທຸລະກິດລາວ, ການຊຸກຍູ້ສົ່ງເສີມດ ການອໍານວນຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ ກໍ່ສະເໜີໃຫ້ ຄະນະກໍາມະການ ອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງແຫ່ງຊາດ ໄດ້ໃຫ້ການອໍານວຍຄວາມສະດວກ, ແກ້ໄຂບັນຫາ ທີ່ບໍ່ເອື້ອອໍານວຍຕໍ່ການເຄື່ອນຍ້າຍສິນຄ້າ, ການນໍາເຂົ້າ-ສົ່ງອອກ ໃຫ້ໄດ້ດີ ແລະ ທັນເວລາ.

ພ້ອມດຽວກັນນີ້ ກໍ່ສະເໜີໃຫ້ ພາກລັດຖະບານ ທຸກຂັ້ນ ໃຫ້ການສະໜັບ ສະໜູນ ໃນການສ້າງຄວາມເຂັ້ມແຂງໃຫ້ອົງກອນທຸລະກິດ ເປັນຕົ້ນແມ່ນ ສະພາການຄ້າ ແລະ ອຸດສາຫະກໍາຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ, ສະມາຄົມ, ກຸ່ມທຸລະກິດ, ກຸ່ມການຜະລິດ ໃຫ້ມີຄວາມເຂັ້ມແຂງ ເຊິ່ງ ການຈັດຕັ້ງທຸລະກິດ ເຫຼົ່ານີ້ຈະຊ່ວຍໃຫ້ຫົວໜ່ວຍການຜະລິດ, ທຸລະກິດ ມີຄວາມເຂັ້ມແຂງ ແລະ ສາມາດປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ ລາວ ເຮົາໄດ້ໃນອະນາຄົດ.

ສໍາລັບຂະບວນການ ປຶກສາຫາລືຂອງກອງປະຊຸມທຸລະກິດລາວ ຄັ້ງທີ 14 ໃນປີ 2022 – 2023 ນີ້. ພາກທຸລະກິດມີການສະເໜີບັນຫາ ແລະ ໄດ້ຄັດຈ້ອນຕາມບັນຫາທີ່ມີຄວາມສໍາຄັນ

ແລະ ສະຫຼຸບສັງລວມເປັນບັນຫາບູລິມະສິດຂອງບັນຫາ. ສ່ວນລາຍລະອຽດຈະມີການສະຫຼຸບໃນວາລາຕໍ່ໄປ.

ສຸດທ້າຍນີ້ໃນນາມຕ່າງໜ້າໃຫ້ກັບຜູ້ປະກອບການໃນຂອບເຂດທົ່ວປະເທດ ຂ້າພະເຈົ້າຂໍສະແດງຄວາມຂອບໃຈອີກເທື່ອໜຶ່ງຕໍ່ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແລະ ຄະນະລັດຖະບານ ໃນການອອກມາດຕະການໃຫ້ການຊ່ວຍເຫຼືອ ກະຕຸ້ນເສດຖະກິດໃນໄລຍະການຈັດຕັ້ງວາລະແຫ່ງຊາດນີ້. ອີກເທື່ອໜຶ່ງຂໍຝາກນຳທ່ານ ນາຍົກລັດຖະມົນຕີ ວ່າດ້ວຍການສ້າງນິຕິກຳອັນໝັ້ນຄົງໃຫ້ແກ່ກອງປະຊຸມທຸລະກິດລາວນີ້. ຂ້າພະເຈົ້າ ຂໍອວຍພອນໃຫ້ກອງປະຊຸມທຸລະກິດລາວຄັ້ງທີ 14 ຈົ່ງປະສົບຜົນສຳເລັດ ແລະ ໄດ້ຮັບໝາກຜົນເປັນຢ່າງສູງ.

ຂໍຂອບໃຈ